# OPEN

## ໂຄງການ OPEN - ແຜນນະໂຍບາຍເພື່ອຈັດຕັ້ງປະຕິບັດຍຸດທະສາດການຫັນເປັນສາກົນໃນການສຶກສາຊັ້ນສູງຂອງລາວ

ເມສາ 2022

Universitat d'Alacant
Universidad de Alicante
Project coordinator

Co-funded by the Erasmus+ Programme of the European Union

OPEN is co-financed by the European Commission through the Erasmus+ Programme, under contract number 610146-EPP-1-2019-1-ES-EPPKA2-CBHE-SP. The contents of this publication reflect only the views of the authors and the European Commission cannot be held responsible for any use which may be made of the information contained therein.

**ຂໍ້ມູນຕິດຕໍ່:**

ຫ້ອງການຄຸ້ມຄອງໂຄງການສາກົນ (OGPI) – ມະຫາວິທະຍາໄລ Alicante ເວັບໄຊ: www.ogpi.ua.es

ເວັບໄຊໂຄງການ OPEN: www.open-laos.eu/

**ປະກາດທາງກົດໝາຍ**

ເອກະສານສະບັບນີ້ໄດ້ຖືກປັບປຸງ ແລະ ດັດແກ້ໂດຍສະຖາບັນຄູ່ຮ່ວມງານຂອງໂຄງການ Erasmus+ "ເປີດລະບົບການສຶກສາຊັ້ນສູງໃນລາວ ສູ່ຍຸດທະສາດການຫັນເປັນສາກົນ", ພາຍໃຕ້ກອບການຮ່ວມມືລະຫວ່າງມະຫາວິທະຍາໄລ ອາລີຄັນເຕ ແລະ ກະຊວງສຶກສາທິການ ແລະ ກິລາ ສປປ ລາວ. ສະນັ້ນ, ທັດສະນະ ແລະ ຄວາມຄິດເຫັນທີ່ສະແດງອອກໃນເອກະສານສະບັບນີ້ ແມ່ນມາຈາກຜູ້ຂຽນ ແລະ ຄະນະກໍາມະທິການເອີລົບ ຈະບໍ່ສາມາດຮັບຜິດຊອບຕໍ່ການນໍາໃຊ້ໃດໆທີ່ອາດຈະຖືກສ້າງຂຶ້ນຈາກຂໍ້ມູນທີ່ບັນຈຸໃນນັ້ນ.

ເນື້ອໃນທັງໝົດທີ່ສ້າງຂຶ້ນໂດຍໂຄງການ OPEN ໂດຍສະເພາະລິຂະສິດ ແມ່ນໄດ້ຮັບການຄຸ້ມຄອງໂດຍກົດໝາຍຊັບສິນທາງປັນຍາ.

ກວດແກ້ໂດຍ ມະຫາວິທະຍາໄລ ອາລີຄັນເຕ, ປະເທດສະເປນ

**© Universidad de Alicante 2022**. ສະຫງວນລິຂະສິດ, ຫ້າມເຜີຍແຜ່ກ່ອນໄດ້ຮັບອະນຸຍາດໂດຍເດັດຂາດ

Co-funded by the
Erasmus+ Programme
of the European Union

ໂຄງການ OPEN ໄດ້ຮັບທຶນສົມທົບຈາກໂຄງການ Erasmus+ ຂອງສະຫະພາບເອີຣົບ (ອ້າງອີງ #610146-EPP-1-2019-1-ES-EPPKA2-CBHE-SP).

## ສາລະບານ

*0. ຕົວອັກສອນຫຍໍ້ ........................................ 4*

*1. ບົດນໍາ ........................................ 5*

*2. ຮູບແບບຄວາມແຕກຕ່າງໃນການຂັບເຄື່ອນພື້ນຖານຄວາມຮູ້ທາງດ້ານສັງຄົມໂດຍຜ່ານການຫັນເປັນສາກົນຂອງການສຶກສາຊັ້ນສູງໃນ ສປປ ລາວ ........................................ 8*

*3. ສິ່ງທ້າທາຍທົ່ວໄປຂອງການສຶກສາຊັ້ນສູງ ສປປ ລາວ ........................................ 11*

*4. ແຜນນະໂຍບາຍໃນການປະຕິບັດຍຸດທະສາດການຫັນເປັນສາກົນຂອງການສຶກສາຊັ້ນສູງໃນ ລາວ ........................................ 12*

## 0. ຕົວອັກສອນຫຍໍ້

- **AI** ປັນຍາປະດິດ
- **ASEAN** ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້
- **CLC** ສູນການຮຽນຮູ້ຊຸມຊົນ
- **DESB** ຫ້ອງການສຶກສາທິການ ແລະ ກິລາເມືອງ
- **ESDP** ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2016-2020
- **ESQAC** ສູນປະກັນຄຸນະພາບການສຶກສາ
- **ESWG** ຄະນະປະຕິບັດງານຂະແໜງການສຶກສາ
- **EU** ສະຫະພາບເອີລົບ
- **G3** ຊັ້ນປະຖົມສຶກສາປີທີ 3
- **G5** ຊັ້ນປະຖົມສຶກສາປີທີ 5
- **HEI** ສະຖາບັນການສຶກສາຊັ້ນສູງ
- **HLO** ຜົນໄດ້ຮັບລະດັບສູງ
- **HRD** ການພັດທະນາຊັບພະຍາກອນມະນຸດ
- **IO** ຜົນໄດ້ຮັບລະດັບກາງ
- **IRO** ຫ້ອງການພົວພັນຕ່າງປະເທດ
- **IT** ເຕັກໂນໂລຊີຂໍ້ມູນຂ່າວສານ
- **JICA** ອົງການຮ່ວມມືສາກົນຍີ່ປຸ່ນ
- **KOICA** ອົງການຮ່ວມມືສາກົນປະເທດເກົາຫລີ
- **KPI** ຕົວຊີ້ວັດປະສິດທິພາບ
- **Lao PDR** ສປປ ລາວ
- **LESMIS** ລະບົບການຄຸ້ມຄອງຂໍ້ມູນຂ່າວສານການສຶກສາ ແລະ ກິລາ ຂອງລາວ
- **M4** ຊັ້ນມັດທະຍົມຕອນຕົ້ນປີທີ 4, ຊັ້ນຮຽນສຸດທ້າຍຂອງມັດທະຍົມຕອນຕົ້ນ
- **M6** ຊັ້ນມັດທະຍົມຕອນຕົ້ນປີທີ 6, ຊັ້ນມັດທະຍົມຕອນປາຍ
- **M&E** ການຕິດຕາມ ແລະ ປະເມີນຜົນ
- **MoES** ກະຊວງສຶກສາທິການ ແລະ ກິລາ
- **NA** ສາມັດຊາໃຫຍ່ແຫ່ງຊາດ
- **NFE** ການສຶກສານອກລະບົບ
- **NSEDP** ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ
- **NUOL** ມະຫາວິທະຍາໄລແຫ່ງຊາດລາວ
- **PA** ທີ່ປຶກສາດ້ານການສອນ
- **PBC** ຄະນະກຳມະການແຜນງານ ແລະ ງົບປະມານ
- **PESS** ພະແນກສຶກສາທິການ ແລະ ກິລາແຂວງ
- **SDG** ເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດ
- **SBG** ເງິນບໍລິຫານໂຮງຮຽນ
- **STEM/STEAM** ວິທະຍາສາດ, ເຕັກໂນໂລຊີ,ວິສະວະກຳສາດ, ແລະ ຄະນິດສາດ/ວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳສາດ, ສິລະປະສາດ ແລະ ຄະນິດສາດ
- **TAC** ຄະນະກຳມະການຈັດສັນຄູ
- **TICA** ອົງການຮ່ວມມືລະຫວ່າງປະເທດໄທ
- **TTC** ວິທະຍາໄລຄູ
- **TVET** ສະຖາບັນອາຊີວະສຶກສາ
- **UNESCO** ອົງການເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳແຫ່ງສະຫະປະຊາຊາດ
- **VEDC** ຄະນະກຳມະການພັດທະນາການສຶກສາໝູ່ບ້ານ
- **WASH** ສຸຂາພິບານ ແລະ ສຸຂະອະນາໄມ

## 1. ບົດນຳ

**◈ ຂໍ້ມູນພື້ນຖານ ແລະ ຈຸດປະສົງຂອງເອກະສານ**

ເອກະສານສະບັບນີ້ ສອດຄ່ອງກັບໜ້າວຽກ 2.4 ຂອງໂຄງການ OPEN ໂດຍແນໃສ່ "ແຜນນະໂຍບາຍເພື່ອຈັດຕັ້ງປະຕິບັດສູ່ຍຸດທະສາດການຫັນເປັນສາກົນໃນການສຶກສາຊັ້ນສູງຂອງລາວ" (OPEN Policy Roadmap) ເພື່ອອຳນວຍຄວາມສະດວກໃຫ້ແກ່ບັນດາສະມາຊິກຄູ່ຮ່ວມມືກ້າວໄປສູ່ການຈັດຕັ້ງປະຕິບັດຍຸດທະສາດການຫັນເປັນສາກົນຂອງການສຶກສາຊັ້ນສູງ (HE) ໂດຍຜ່ານການວິເຄາະຢ່າງຖີ່ຖ້ວນ ແລະ ການຕິດຕາມນະໂຍບາຍຂອງຄູ່ຮ່ວມມືພາຍໃຕ້ລະບຽບກົດໝາຍຂອງກະຊວງສຶກສາທິການ ແລະ ກິລາ, ໃຫ້ການຊ່ວຍເຫຼືອ ແລະ ປັບປຸງວຽກງານການຄຸ້ມຄອງ ແລະ ການເຮັດລາຍງານ. ບັນດາກິດຈະກຳເຫຼົ່ານີ້ຈະສະໜັບສະໜູນການປະຕິຮູບນະໂຍບາຍຂອງຄູ່ຮ່ວມງານຂອງໂຄງການ OPEN ເພື່ອຊ່ວຍໃຫ້ບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນການປະຕິຮູບນະໂຍບາຍຂອງກະຊວງສຶກສາທິການ ແລະ ກິລາ.

ແຜນນະໂຍບາຍຂອງໂຄງການ OPEN ແມ່ນໄດ້ສັງລວມຢູ່ຂອບຂອງໜ້າວຽກທີ 2, ແຜນການ ແລະ ນະໂຍບາຍຂອງສະຖາບັນ ໄດ້ສຸມໃສ່ການປ່ຽນແປງນະໂຍບາຍທີ່ຈຳເປັນໃນລະດັບສະຖາບັນ, ເພື່ອສົ່ງເສີມການເຄື່ອນໄຫວສາກົນໃນລະດັບການສຶກສາຊັ້ນສູງຂອງ ສປປ ລາວ.

ເອກະສານສະບັບນີ້ ຍັງໄດ້ຊຸກຍູ້ຜົນສຳເລັດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP 2021-2025) ເພື່ອຮັບປະກັນວ່າ "ຂະແໜງການສຶກສາ ແລະ ກິລາ ໃນ ສປປ ລາວ ມີໂຄງສ້າງ, ມີການຄຸ້ມຄອງ ແລະ ມີຊັບພະຍາກອນຢ່າງເໝາະສົມ ເພື່ອສ້າງໂອກາດໃຫ້ແກ່ພົນລະເມືອງລາວທຸກຄົນມີຄວາມສະເໝີພາບ ແລະ ເຂົ້າເຖິງການສຶກສາ ແລະ ກິລາ ທີ່ມີຄຸນະພາບ, ໄດ້ຮັບຜົນປະໂຫຍດຈາກການພັດທະນາເສດຖະກິດ - ສັງຄົມ ແລະ ເຮັດໃຫ້ ສປປ ລາວ ຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025 ແລະ ສະໜັບສະໜູນຄວາມຄືບໜ້າຂອງຂອງເປົ້າໝາຍສະຫະສະວັດ SDG-4 (MoES, 2020)" .

**ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021 - 2025, ກຳນົດຈຸດປະສົງນະໂຍບາຍສຳລັບແຜນຍ່ອຍຂອງການສຶກສາຊັ້ນສູງ ດັ່ງຕໍ່ໄປນີ້:**

1. ເພື່ອຍົກລະດັບການສຶກສາຊັ້ນສູງໃນການປະກອບສ່ວນ ແລະ ສະໜັບສະໜູນບູລິມະສິດທາງດ້ານເສດຖະກິດ-ສັງຄົມຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 9.
2. ເພື່ອສົ່ງເສີມ ແລະ ພັດທະນາບັນດາໂຄງການທີ່ກ່ຽວຂ້ອງກັບເຕັກໂນໂລຊີ ລວມທັງປັນຍາປະດິດ (AI) ໃຫ້ແກ່ນັກສຶກສາມະຫາວິທະຍາໄລ ໂດຍສະເພາະແມ່ນສາຂາ STEM ເພື່ອໃຫ້ຈຳນວນນັກສຶກສາໃນສາຂານີ້ເພີ່ມຂຶ້ນ.
3. ເພື່ອສ້າງສູນຄວາມເປັນເລີດໃນມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ.
4. ດຳເນີນການຕິດຕາມກວດກາເປັນປະຈຳ ເພື່ອກຳນົດການຈ້າງງານຂອງນັກສຶກສາທີ່ຮຽນຈົບ.
5. ເພື່ອເສີມຂະຫຍາຍຄຸນະພາບຂອງຄູສອນ ໂດຍສະເພາະຄູສອນວິຊາວິທະຍາສາດທຳມະຊາດ.

6. ເພື່ອພັດທະນາຮູບແບບການຈັດສັນງົບປະມານການສຶກສາຂອງມະຫາວິທະຍາໄລ ແລະ ສ້າງຂອບເຂດບູລິມະສິດ ໃຫ້ແກ່ນັກສຶກສາໄປສຶກສາຕໍ່ຢູ່ຕ່າງປະເທດ, ເພື່ອໃຫ້ສອດຄ່ອງກັບການພັດທະນາເສດຖະກິດ - ສັງຄົມຂອງ ປະເທດ.
7. ເພື່ອສະໜອງການຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ແກ່ປະເທດຊາດ.

**ຈຸດປະສົງຂອງນະໂຍບາຍດັ່ງກ່າວໄດ້ປະກົດໃຫ້ເຫັນໃນບັນດາເປົ້າໝາຍ ແລະ ຕົວຊີ້ວັດພື້ນຖານສຳລັບພາກສ່ວນການສຶກສາຊັ້ນສູງ:**

1. ຈຳນວນຜູ້ຮຽນຈົບສາຂາວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ (ປະລິນຍາຕີ ຫຼື ສູງກວ່າ) ຈາກມະຫາວິທະຍາໄລພາກລັດບັນລຸ 20,000 ຄົນໃນປີ 2025.
2. ດັດຊະນີຄວາມສະເໝີພາບລະຫວ່າງຍິງ-ຊາຍ, ສຳລັບຈຳນວນຜູ້ຮຽນຈົບ (ປະລິນຍາຕີ ຫຼື ສູງກວ່າ) ຈາກ ມະຫາວິທະຍາໄລພາກລັດ, ບັນລຸຢ່າງໜ້ອຍ 0.90% ໃນປີ 2025.
3. ດຳເນີນການສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງສະຖາບັນເທັກໂນໂລຊີ.
4. ນັກຮຽນເຂົ້າຮຽນໃນສາຂາ STEM ເພີ່ມຂຶ້ນ 50% ເມື່ອທຽບໃສ່ຄຸນະພາບການຮຽນ-ການສອນໃນສາຂານີ້.
5. ມີການປະເມີນສູນຄວາມເປັນເລີດທັງ 4 ແຫ່ງ.
6. ມີການຈັດຕັ້ງທີມງານລົງຕິດຕາມໜ້າວຽກຂອງນັກສຶກສາທີ່ໄດ້ຈົບການສຶກສາຈາກແຕ່ລະຄະນະວິຊາ.
7. ມີການປະເມີນຄຸນະພາບພາຍໃນມະຫາວິທະຍາໄລ ປີລະ 1 ຄັ້ງ, ໃນທຸກໆ 5 ປີ ທັງ 4 ມະຫາວິທະຍາໄລ ຈະໄດ້ ຮັບການປະເມີນຈາກພາຍນອກ.
8. ທົດລອງການເປັນເອກະລາດຂອງມະຫາວິທະຍາໄລ ໃນການຄຸ້ມຄອງວຽກງານການເງິນແມ່ນໄດ້ດຳເນີນຢູ່ ມະຫາວິທະຍາໄລແຫ່ງຊາດ.
9. ຕຳແໜ່ງວິຊາການຂອງສະຖາບັນການສຶກສາຊັ້ນສູງໃຫ້ກຳນົດຕາມຄຸນະພາບ ແລະ ມາດຕະຖານທີ່ໄດ້ກຳນົດໄວ້ ໃນນິຕິກຳວ່າດ້ວຍຫົວຂໍ້ດ້ານວິຊາການ ສະບັບເລກທີ 03.

**ເພື່ອບັນລຸເປົ້າໝາຍທີ່ວາງໄວ້, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ໄດ້ພັດທະນາແຜນຍຸດທະສາດດັ່ງຕໍ່ໄປນີ້: (MoES 2020):**

1. ສຶກສາຄວາມເປັນໄປໄດ້ເພື່ອສ້າງສະຖາບັນເຕັກໂນໂລຊີແຫ່ງໃໝ່, ລວມທັງສູນປັນຍາປະດິດ. ການສຶກສາຄັ້ງນີ້ຈະສ້າງ ກອບການຈັດສັນພະນັກງານ, ຄວາມຕ້ອງການທາງງົບປະມານ ແລະ ແຜນຈັດຕັ້ງປະຕິບັດໃນໄລຍະ 5 ປີ ຂອງຂະ ແໜງການສຶກສາ ແລະ ກິລາ.
2. ຈະບັນລຸຂໍ້ຕົກລົງໃນໜ້າວຽກ (ToRs) ກ່ຽວກັບການປະເມີນສູນຄວາມເປັນເລີດທັງ 4 ແຫ່ງໂດຍອິສະຫຼະ. ຂໍ້ຕົກລົງ ໜ້າວຽກເຫຼົ່ານີ້ຈະສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ທັງ 4 ສູນ, ໂດຍສະເພາະເພື່ອປັບປຸງການເຊື່ອມຕໍ່ກັບ 9 ບູລິມະສິດຂອງແຜນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ 9.

3. ກົມການສຶກສາຊັ້ນສູງ ແລະ ກົມກິດຈະການນັກສຶກສາ ຈະພັດທະນາແຜນສະເໜີໂຄງການ ເພື່ອຈັດສັນທຶນການສຶກສາໃຫ້ນັກຮຽນເຂົ້າຮຽນຕາມສາຂາບູລິມະສິດ ແລະ ນັກຮຽນດ້ອຍໂອກາດໃຫ້ຫຼາຍຂຶ້ນ. ຂໍ້ສະເໜີທີ່ໄດ້ຮັບການອະນຸມັດຈະຖືກປຶກສາຫາລື ຢູ່ພາຍໃນຄະນະປະສານງານຂະແໜງສຶກສາ (ESWG) ເພື່ອໄດ້ຮັບການຮັບຮອງຈາກບັນດາຄູ່ຮ່ວມພັດທະນາ, ຮັບປະກັນການຈັດຕັ້ງໂຄງການໃຫ້ທຶນສຶກສາໃຫ້ສອດຄ່ອງກັບບູລິມະສິດຂອງລັດຖະບານ.
4. ມຊ ຈະນຳພາການພັດທະນາ ແລະ ຈັດຕັ້ງປະຕິບັດເວັບໄຊການສຶກສາຊັ້ນສູງເພື່ອສົ່ງເສີມການຄົ້ນຄວ້າວິທະຍາສາດໂດຍອາຈານມະຫາວິທະຍາໄລ ແລະ ນັກສຶກສາປະລິນຍາໂທ.
5. ຄຳສັ່ງແນະນຳຂອງລັດຖະມົນຕີວ່າດ້ວຍການຈັດບູລິມະສິດຕໍ່ກັບໂຄງລ່າງພື້ນຖານດ້ານວິທະຍາສາດທຳມະຊາດ ແລະສື່ການຮຽນການສອນທີ່ຕອບສະໜອງບົດບາດຍິງ-ຊາຍ ຢູ່ ວິທະຍາໄລສ້າງຄູ (TTCs) ແລະ ມະຫາວິທະຍາໄລ, ເພື່ອຈັດບູລິມະສິດການນຳໃຊ້ງົບປະມານ ແມ່ນໄດ້ຮັບການອະນຸມັດ ແລະ ເຜີຍແຜ່.
6. ຄຳສັ່ງຂອງລັດຖະມົນຕີຈະກຳນົດໃນບູລິມະສິດຂໍ້ຕົກລົງຮ່ວມກັບຜູ້ໃຫ້ທຶນໃນອະນາຄົດ ກ່ຽວກັບການຍົກລະດັບຄະນະວິສະວະກຳສາດ. ໃຫ້ບູລິມະສິດແກ່ນັກສຶກສາເຂົ້າຮຽນໃໝ່ ແລະ ຮຽນຫຼັກສູດຕໍ່ເນື່ອງໃນສາຂາວິທະຍາສາດທຳມະຊາດ.
7. ນະໂຍບາຍສຳລັບທຶນການສຶກສາຈະໄດ້ຮັບການປັບປຸງ ໂດຍໃຫ້ບູລິມະສິດນັກສຶກສາຂາວິທະຍາສາດທຳມະຊາດ.
8. ຄະນະກຳມະການຂະແໜງການສຶກສາຈະຮັບຮອງເອົາຄຳແນະນຳຂອງຄະນະເຮັດວຽກຮ່ວມດ້ານວິຊາການ (ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງກະສິກຳ ແລະ ປ່າໄມ້, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາ) ພາຍໃຕ້ກຸ່ມຈຸດສຸມທີ່ຮຽນຈົບຊັ້ນມັດທະຍົມ, ຈະມີຄຳແນະນຳໃຫ້ບັນດາມະຫາວິທະຍາໄລ ແລະ ສະຖາບັນອະຊີວະສຶກສາ ກ່ຽວກັບວິທີການ ແລະ ເວລາທີ່ຈະດຳເນີນການສຶກສາການຕິດຕາມປະສິດທິພາບ ແລະ ນຳໃຊ້ຜົນໄດ້ຮັບເປັນບ່ອນອີງສຳລັບການຕັດສິນໃຈກ່ຽວກັບການຍົກລະດັບຫຼັກສູດໃນອະນາຄົດ.
9. ໜ່ວຍງານປະກັນຄຸນະພາບ ມຊ ໄດ້ຖືກມອບໝາຍໃຫ້ຊ່ວຍສົ່ງເສີມມະຫາວິທະຍາໄລຕ່າງໆຂອງລັດ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດໃນການປະເມີນປະຈຳປີຂອງຕົນ.
10. ຄຳສັ່ງແນະນຳຂອງລັດຖະມົນຕີຈະຊີ້ນຳທຸກມະຫາວິທະຍາໄລຂອງລັດໃຫ້ດຳເນີນການປະເມີນຜົນເຫຼົ່ານີ້, ດ້ວຍບົດລາຍງານຕໍ່ລັດຖະມົນຕີ ແລະ ຜູ້ບໍລິຫານການສຶກສາຊັ້ນສູງ.
11. ກອບການປະເມີນການສອນສຳລັບອາຈານສະຖາບັນການສຶກສາຊັ້ນສູງໃນຫຼາຍລະດັບທີ່ແຕກຕ່າງກັນທາງດ້ານວຸດທິ ແລະ ປະສົບການໄດ້ຮັບການພັດທະນາ ແລະ ຮັບຮອງ.
12. ຄຳສັ່ງແນະນຳຂອງລັດຖະມົນຕີເປັນແນວທາງໃຫ້ສະຖາບັນການສຶກສາຊັ້ນສູງທຸກແຫ່ງ, ເພື່ອຈັດຕັ້ງປະຕິບັດການປະເມີນການສອນຢ່າງເປັນປົກກະຕິ.
13. ຄຳສັ່ງແນະນຳຂອງລັດຖະມົນຕີ ແລະ ກອບລະບຽບການເລື່ອນຕຳແໜ່ງ ຈະຖືກນຳໃຊ້ເພື່ອຈັດຕຳແໜ່ງທາງດ້ານວິຊາການໃນສະຖາບັນການສຶກສາຊັ້ນສູງ.
14. ຄະນະນຳກະຊວງຈະອະນຸຍາດໃຫ້ຂຽນບົດສະເໜີເພື່ອພັດທະນາ ແລະ ທົດລອງນຳໃຊ້ລະບົບການແບ່ງປັນງົບປະມານໃຫ້ມະຫາວິທະຍາໄລທ້ອງຖິ່ນ ໂດຍອີງຕາມຄວາມສາມາດໃນການຈັດຕັ້ງປະຕິບັດຕົວຈິງຂອງມະຫາວິທະຍາໄລນັ້ນໆ

(ດ້ວຍອັດຕາຄົງທີ່, ຄິດໄລ່ຕໍ່ຫົວໜ່ວຍນັກສຶກສາ, ສາຂາວິທະຍາສາດທຳມະຊາດ, ຫຼຸດຄວາມແຕກໂຕນ). ບົດສະເໜີດັ່ງກ່າວຈະຕ້ອງປະກອບມີຄຳແນະນຳ ແລະ ຄູ່ມືໃນການປະຕິບັດ ເພື່ອໃຫ້ກະຊວງນຳໄປພິຈາລະນາ.

## 2. ຮູບແບບຄວາມແຕກຕ່າງໃນການຂັບເຄື່ອນພື້ນຖານຄວາມຮູ້ທາງດ້ານສັງຄົມ ໂດຍຜ່ານການຫັນເປັນສາກົນຂອງການສຶກສາຊັ້ນສູງໃນ ສປປ ລາວ

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP 2021-2025) ທີ່ປະກາດໃຊ້ໂດຍກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດນະໂຍບາຍຮອບດ້ານພາຍໃນຂະແໜງການສຶກສາ ແລະ ກິລາ ໃນ ສປປ ລາວ ໂດຍໄດ້ກຳນົດການສຶກສາຊັ້ນສູງເປັນຂະແໜງການຍ່ອຍ. ແຜນພັດທະນາຂະແໜງການສຶກສາ ແລະ ກິລາແມ່ນໄດ້ຖືກກຳນົດຂຶ້ນພາຍໃຕ້ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (NSEDP 2020-2030). ເຖິງຢ່າງໃດກໍ່ຕາມ, ໃນປະຈຸບັນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ແມ່ນອີງໃສ່ບຸລິມະສິດການພັດທະນາແຫ່ງຊາດ, ໄດ້ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຕ່າງໆ ນອກນັ້ນກໍ່ໄດ້ມີການຖອດຖອນບົດຮຽນຈາກແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP 2016-2020), (MoPI 2016) ທີ່ຜ່ານມາ.

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP 2021-2025) ຮັບຮູ້ຜົນກະທົບຂອງການແຜ່ລະບາດພະຍາດໂຄວິດ-19 ຕໍ່ກັບຂະແໜງການສຶກສາມາຈາກການຂາດແຄນຊັບພະຍາກອນພາກລັດ ໃນການສະໜອງທຶນຮອນໃຫ້ແກ່ຂະແໜງການສຶກສາ ແລະ ຈາກຄວາມອາດສາມາດຂອງຄອບຄົວທີ່ທຸກຍາກໃນການສົ່ງລູກ ແລະ ໄວໜຸ່ມເຂົ້າຮຽນໃນຂະແໜງການສຶກສາ. ດັ່ງນັ້ນ, ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP 2021-2025), ອີງໃສ່ 2 ສະຖານະການແຕກຕ່າງກັນກຳນົດດັ່ງນີ້:

- "**ສະຖານະການຄົງທີ່**" ສະໜອງພື້ນຖານເພື່ອພຽງແຕ່ຮັກສາລະດັບຄຸນະພາບ ແລະ ການສະໜອງການບໍລິການໃນປະຈຸບັນ ໂດຍບໍ່ມີການປັບປຸງປະສິດທິພາບ. ມັນຊີ້ບອກຍຸດທະສາດ (ຜົນໄດ້ຮັບລະດັບປານກາງ) ໂດຍກຳນົດພຽງແຕ່ "ງົບປະມານພື້ນຖານ" ເພື່ອບັນລຸຄວາມຕ້ອງການຂອງຂະແໜງການເຫຼົ່ານີ້. ເຖິງຢ່າງໃດກໍຕາມ, ການພິຈາລະນາຜົນກະທົບຂອງພະຍາດໂຄວິດ-19 ຢູ່ ສປປ ລາວ ແລະ ຄວາມສ່ຽງດ້ານເສດຖະກິດມະຫາພາກ, ຜົນສຳເລັດຂອງສະຖານະການດັ່ງກ່າວອາດຈະເປັນໄປບໍ່ໄດ້.
- "**ສະຖານະການເພີ່ມຄຸນະພາບ**" ຈະບັນລຸໄດ້ພຽງແຕ່ຖ້າການຈັດສັນງົບປະມານແຫ່ງຊາດ ແລະ ແຫຼ່ງທຶນຂອງຜູ້ໃຫ້ທຶນສາກົນໃຫ້ແກ່ຂະແໜງການສຶກສາເພີ່ມຂຶ້ນຢ່າງຫຼວງຫຼາຍ. ຍຸດທະສາດແມ່ນກອບ (ຜົນໄດ້ຮັບໃນລະດັບສູງ) ພາຍໃຕ້ການສົມມຸດຕິຖານຂອງລະດັບເງິນທຶນທີ່ສູງຂຶ້ນສຳລັບຂະແໜງການ. ເຖິງຢ່າງໃດກໍຕາມ, ຜົນກະທົບທາງດ້ານເສດຖະກິດຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ການສະໜອງທຶນໃນຮູບການ "ຍົກສູງຄຸນນະພາບ" ໃນຕົ້ນປີ 2021-25.

**ຄວາມແຕກຕ່າງລະຫວ່າງສະຖານະການທີ່ແຕກຕ່າງກັນ ແລະ ຜົນໄດ້ຮັບທີ່ສອດຄ່ອງກັນນີ້ ສະແດງໃຫ້ເຫັນຢູ່ໃນຕາຕະລາງ ທີ່ຄັດມາຈາກແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) ດັ່ງຕໍ່ໄປນີ້:**

| ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) | | |
|---|---|---|
| **ເປົ້າໝາຍທີ 1** | | |
| ຂະແໜງການສຶກສາມີໂຄງສ້າງ, ການຄຸ້ມຄອງ ແລະ ແຫຼ່ງຊັບພະຍາກອນຢ່າງເໝາະສົມ ເພື່ອສ້າງໂອກາດໃຫ້ພົນລະເມືອງລາວທຸກຄົນໄດ້ເຂົ້າເຖິງການສຶກສາທີ່ມີຄຸນະພາບຢ່າງສະເໝີພາບ ແລະ ສະໜັບສະໜູນ ສປປ ລາວ ໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025 ແລະ ສະໜັບສະໜູນຄວາມຄືບໜ້າຂອງເປົ້າໝາຍສະຫະສະວັດ (SDG-4). | | |
| **8 ຜົນໄດ້ຮັບໃນລະດັບສູງ (ສະຖານະການຍົກສູງຄຸນະພາບ)** | | |
| HLO 1: ຈໍານວນຜູ້ຮຽນຈົບໃນທຸກລະດັບເພີ່ມຂຶ້ນດ້ວຍການປັບປຸງຜົນການຮຽນ ໂດຍເນັ້ນໃສ່ຈຸດພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ | HLO 2: ຈໍານວນຄູສອນ ແລະ ອໍານວຍການທີ່ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນຕາມມາດຕະຖານການສິດສອນ ດ້ວຍການປະເມີນປະສິດທິພາບຂອງຄູເປັນປົກກະຕິ | HLO 3: ໂຮງຮຽນທັງໝົດມີງົບປະມານການເງິນ ແລະ ຊັບພະຍາກອນມະນຸດ ເພື່ອເຮັດວຽກຢ່າງມີປະສິດທິພາບ ຄຽງຄູ່ກັບການຄຸ້ມຄອງທີ່ເຂັ້ມງວດ ເພື່ອປັບປຸງຜົນການຮຽນຂອງນັກຮຽນ |
| HLO 4: ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ແລະ ໄວໜຸ່ມ ເພີ່ມຂຶ້ນ, ໂດຍການຫຼຸດຜ່ອນຄວາມແຕກໂຕນ | HLO 5: ຄຸນະພາບ ແລະ ຈໍານວນຜູ້ປະລະໂຮງຮຽນ ແລະ ນັກຮຽນຈົບການສຶກສາຂັ້ນພື້ນຖານທີ່ໄດ້ຮັບການຈ້າງງານ ແມ່ນສອດຄ່ອງກັບຄວາມຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 | HLO 6: ຂະແໜງການສຶກສາໄດ້ຮັບຈັດຕັ້ງ, ຄຸ້ມຄອງຊັບພະຍາກອນ ໄດ້ມີການຕິດຕາມ ແລະ ປະເມີນຢ່າງເໝາະສົມໃນທຸກຂັ້ນ ເພື່ອຍົກສູງຂະແໜງການສຶກສາໃຫ້ມີປະສິດທິພາບ ແລະ ປະສິດທິຜົນ |
| HLO 7: ຄວາມບໍ່ສະເໝີພາບຫຼຸດລົງ ໂດຍຜ່ານແຜນການສະໜອງງົບປະມານຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP) | HLO 8: ພົນລະເມືອງລາວມີສຸຂະພາບແຂງແຮງທັງຮ່າງກາຍ ແລະ ຈິດໃຈ; ບຸກຄະລາກອນດ້ານກິລາ, ນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ປະກອບສ່ວນໃນການຍົກສູງລະດັບຄຸນະພາບທາງດ້ານກິລາ ແລະ ຖານະບົດບາດໃນເວທີສາກົນ | |
| **44 ຜົນໄດ້ຮັບລະດັບກາງ (ສະຖານະການຄົງຕົວ)** | | |
| IO 1.1 ຫຼັກສູດສະບັບປັບປຸງ ໄດ້ຮັບການຈັດຕັ້ງປະຕິບັດໃນທຸກຊັ້ນຮຽນ | IO 1.2 ຜົນການຮຽນຂອງນັກຮຽນ ປ.3, ປ.5, ມ.4 ແລະ ມ.6 ໄດ້ຮັບການປັບປຸງດີຂຶ້ນ | IO 1.3: ອັດຕາການເຂົ້າຮຽນໃໝ່ ແລະ ການເລື່ອນຂັ້ນໃນທຸກລະດັບເພີ່ມຂຶ້ນ ແນໃສ່ເຮັດໃຫ້ອັດຕາການຈົບຊັ້ນເພີ່ມຂຶ້ນ |
| IO 1.4: ສົ່ງເສີມການຂະຫຍາຍຫ້ອງເຝິກອົບຮົມວິຊາຊີບ ເພື່ອພັດທະນາທັກສະໃຫ້ແກ່ນັກຮຽນທີ່ຈະຈົບຊັ້ນມັດທະຍົມຕອນປາຍ | IO 1.5: ຫຼຸດຜ່ອນຄວາມແຕກໂຕນທາງດ້ານຊັບພະຍາກອນລະຫວ່າງເຂດທີ່ດ້ອຍໂອກາດ ແລະ ເຂດທີ່ມີໂອກາດດີກວ່າ ໂດຍຜ່ານການສ້າງຕັ້ງກຸ່ມໂຮງຮຽນ | IO 2.1: ຄູສອນມີຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດຫຼັກສູດໃໝ່ ໂດຍຜ່ານການຊ່ວຍເຫຼືອຈາກວິຊາການກຸ່ມໂຮງຮຽນ ແລະ ຄູສຶກສານິເທດ |
| IO 2.2: ຫຼັກສູດສ້າງຄູ ແລະ ຫຼັກສູດເຝິກອົບຮົມຄູຊັ້ນອະນຸບານ, ປະຖົມ ແລະ ມັດທະຍົມ ໄດ້ຮັບໄດ້ຮັບການປັບປຸງ ແລະ ຈັດຕັ້ງປະຕິບັດ ເພື່ອໃຫ້ສອດຄ່ອງກັບຫຼັກສູດການຮຽນ-ການສອນໃໝ່ໃນໂຮງຮຽນ ແລະ ມາດຕະຖານການສິດສອນ | IO 2.3: ລະບົບການປະເມີນຜົນການປະຕິບັດໜ້າທີ່ຂອງຄູ ພ້ອມດ້ວຍເຄື່ອງມືການປະເມີນຜົນ ໄດ້ຮັບການປັບປຸງ ໂດຍຕິດພັນກັບມາດຕະຖານການສອນ ພ້ອມທັງໄດ້ຮັບການຈັດຕັ້ງປະຕິບັດ ເພື່ອກໍານົດຄວາມຕ້ອງການທີ່ເປັນບຸລິມະສິດ | IO 2.4: ສະຖາບັນສ້າງຄູ ໄດ້ຖືກຍົກລະດັບໃຫ້ເປັນສູນກາງໃນການພັດທະນາວິຊາຊີບຄູສອນ ທັງກ່ອນ ແລະ ຫຼັງປະຈໍາການ (ແຕ່ອະນຸບານຮອດຊັ້ນມັດທະຍົມສຶກສາ) ພ້ອມທັງເປັນສູນກາງໃນການຝຶກອົບຮົມຄູສຶກສານິເທດ |
| IO 2.5: ຂີດຄວາມສາມາດຂອງຜູ້ອໍານວຍການໂຮງຮຽນມີຄວາມເຂັ້ມແຂງຂຶ້ນ ເພື່ອໃຫ້ສາມາດປັບປຸງການຮຽນ-ການສອນໃນໂຮງຮຽນຂອງເຂົາເຈົ້າ | IO 3.1: ມາດຕະຖານຂັ້ນພື້ນຖານຂອງຄຸນະພາບສໍາລັບການສຶກສາກ່ອນໄວຮຽນ ແລະ ມັດທະຍົມສຶກສາ ໄດ້ຮັບການພັດທະນາ, ທົດລອງ ແລະ ຈັດຕັ້ງປະຕິບັດ ໄດ້ຮັບການພັດທະນາ ພາຍໃຕ້ຂອບມາດຕະຖານຂັ້ນພື້ນຖານຂອງທຸກຊັ້ນການສຶກສາຢູ່ໃນ | IO 3.2: ມີຂະບວນການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນແບບຍືນຍົງ ເພື່ອເປັນບ່ອນອີງໃນການວາງແຜນຂັ້ນເມືອງ ແລະ ການກໍານົດເປົ້າໝາຍການສະໜັບສະໜູນ. |

| | | |
|---|---|---|
| | ລະດັບໂຮງຮຽນ ແລະ ເປັນພື້ນຖານໃຫ້ແກ່ການປະເມີນຕົນເອງ ແລະ ການວາງແຜນພັດທະນາໂຮງຮຽນ | |
| IO 3.3 ເງິນບໍລິຫານໂຮງຮຽນສອດຄ່ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | IO 3.4 ການຈັດສັນຄູສອດຄ່ອງກັບຄວາມຕ້ອງການໃນຂັ້ນໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | IO 3.5 ການຈັດສັນປຶ້ມແບບຮຽນ, ຄູ່ມື ແລະ ອຸປະກອນການຮຽນ ສອດຄ່ອງຕາມຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ |
| IO 3.6 ທຸກໂຮງຮຽນຕ້ອງໄດ້ຮັບການສະໜັບສະໜູນເພື່ອໃຫ້ໄດ້ຮັບສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມໃນຂັ້ນພື້ນຖານ | IO 4.1: ອັດຕາການຮູ້ໜັງສືສຳລັບໄວໜຸ່ມອາຍຸ 15 ຫາ ຜູ້ໃຫຍ່ອາຍຸ 40 ປີ ເພື່ອຫຼຸດຜ່ອນຄວາມແຕກໂຕນ | IO 4.2: ລິງຕິດຕາມການຮຽນ-ການສອນ ລຶບລ້າງຄວາມບໍ່ຮູ້ໜັງສືຂອງການສຶກສານອກໂຮງຮຽນ ໂດຍການສຸ່ມເອົາກຸ່ມຕົວຢ່າງ ເພື່ອປະເມີນຜົນກະທົບທີ່ກ່ຽວຂ້ອງກັບການຮູ້ໜັງສືຂອງໄວໜຸ່ມ |
| IO 4.3: ການບໍລິການດ້ານການສຶກສານອກໂຮງຮຽນ ແລະ ໂຄງປະກອບຂອງການສຶກສານອກໂຮງຮຽນ ຕ້ອງປະກອບສ່ວນໃຫ້ອັດຕາການຮູ້ໜັງສືຂອງໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ | IO 5.1: ຄຸນະພາບການສຶກສາຊັ້ນມັດທະຍົມຕອນປາຍ ໄດ້ຮັບການປັບປຸງດີຂຶ້ນ ເພື່ອສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ການສຶກສາຊັ້ນສູງ | IO 5.2: ຈຳນວນ ແລະ ຄຸນະພາບຂອງຄູ ທີ່ຈົບຈາກສະຖາບັນສ້າງຄູ ແລະ ຄະນະສຶກສາສາດ ໃນສາຂາວິຊາວິທະຍາສາດທຳມະຊາດ ໄດ້ຮັບການປັບປຸງດີຂຶ້ນ ແນ່ໃສ່ເພື່ອປັບປຸງການຮຽນ-ການສອນວິທະຍາສາດທຳມະຊາດໃນຊັ້ນມັດທະຍົມ |
| IO 5.3: ຈຳນວນ ແລະ ຄຸນະພາບຂອງນັກຮຽນທີ່ຈົບຫຼັກສູດກະສິກຳ, ການບໍລິການ ແລະ ອຸດສາຫະກຳ ຢູ່ສາຍອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ ເພີ່ມຂຶ້ນ | IO 5.4: ຫຼັກສູດການຮຽນໃນສາຍອະຊີວະສຶກສາ ໄດ້ຮັບການປັບປຸງເພື່ອສອດຄ່ອງກັບຄວາມຕ້ອງການ ທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 | IO 5.5: ຄຸນະພາບຂອງຫຼັກສູດອາຊີວະສຶກສາ ໄດ້ຮັບການປັບປຸງໃຫ້ດີຂຶ້ນ |
| IO 5.6: ຄຸນະພາບຂອງຄູສອນໃນສະຖາບັນອາຊີວະສຶກສາ ໄດ້ຮັບການປັບປຸງດີຂຶ້ນ | IO 5.7: ສ້າງຄວາມເຂັ້ມແຂງດ້ານການຮ່ວມມື ສຳລັບວຽກງານອາຊີວະສຶກສາ ໃນລະດັບຊາດ ແລະ ລະດັບທ້ອງຖິ່ນກັບອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນ | IO 5.8: ລະບົບການບໍລິຫານ ແລະ ຄຸ້ມຄອງອາຊີວະສຶກສາ ມີຄວາມເຂັ້ມແຂງ |
| IO 5.9: ຂອບຄຸນວຸດທິການສຶກສາແຫ່ງຊາດ ໄດ້ກວມເອົາຄຸນວຸດທິການສຶກສາໃນການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ | IO 5.10: ການຮຽນ-ການສອນຢູ່ລະດັບມະຫາວິທະຍາໄລ ແລະ ການຄົ້ນຄວ້າວິທະຍາສາດໃນຂົງເຂດບຸລິມະສິດຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ໄດ້ຮັບການປັບປຸງ ແລະ ເຂັ້ມແຂງຂຶ້ນ | IO 5.11: ມະຫາວິທະຍາໄລ ແລະ ໜ່ວຍງານປະກັນຄຸນະພາບ ມີການປະເມີນຕົນເອງປະຈຳປີ |
| IO 5.12: ມີນິຕິກຳກ່ຽວກັບວິທີການຄິດໄລ່ການສະໜອງທຶນ ໃຫ້ແກ່ນັກສຶກສາທີ່ສຶກສາຢູ່ມະຫາວິທະຍາໄລທີ່ຢູ່ຕ່າງແຂວງໂດຍອີງໃສ່ຜົນການຮຽນ | IO 6.1: ກົງຈັກການຈັດຕັ້ງຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ລວມທັງການບັນຈຸວຽກງານການບໍລິການ ທີ່ອີງໃສ່ໂຮງຮຽນເປັນຫຼັກ ເຂົ້າໃນກົງຈັກການຈັດຕັ້ງ ແລະ ພາລະບົດບາດຂອງຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) ໃນລະດັບໂຮງຮຽນ | IO 6.2: ແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາ ແລະ ກິລາ ໄດ້ຖືກຈັດຕັ້ງປະຕິບັດ, ລວມທັງພະນັກງານຂອງສຶກສາແຂວງ ແລະ ສຶກສາເມືອງ ໄດ້ຮັບການຈັດສັນຕາມຄວາມຕ້ອງການ ແລະ ໄດ້ຮັບການສະໜອງການສ້າງຄວາມສາມາດທີ່ເໝາະສົມ ແລະ ພຽງພໍໃນການປະຕິບັດພາລະບົດບາດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນໜ້າວຽກ ແລະ ຕຳແໜ່ງງານ |
| IO 6.3: ບັນດາຄະນະກຳມະການປະຕິບັດງານ (ຄະນະກຳມະການຈັດສັນຄູ ແລະ ຄະນະກຳມະການແຜນການ ແລະ ການເງິນ) ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ມີຄວາມເຂັ້ມແຂງ ໂດຍການນຳໃຊ້ຂໍ້ມູນ | IO 6.4: ຂອບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-25 ໄດ້ຈັດຕັ້ງປະຕິບັດໃນແຕ່ລະປີ | IO 6.5: ການກະກຽມຕ້ອນໂຕ້ສຸກເສີນ ແລະ ການຮັບມືກັບໄພພິບັດ ຂອງລະບົບການສຶກສາ |

| | | |
|---|---|---|
| ອ້າງອີງຈາກແຜນປະຈຳປີທີ່ມີການຄິດໄລ່ຄ່າໃຊ້ຈ່າຍ (ACSEP). ຜົນການປະເມີນຜົນການຮຽນຂອງນັກຮຽນ ແລະ ຂໍ້ມູນຈາກ LESMIS ໄດ້ຖືກນຳໃຊ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ຍຸດທະສາດແຜນພັດທະນາຂະແໜງການສຶກສາ ແລະ ກິລາ | | |
| IO 7.1: ແຜນງົບປະມານຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໄດ້ລວມເອົາຍຸດທະສາດການໃຊ້ຈ່າຍງົບປະມານທີ່ມີຄວາມຊັດເຈນ ເພື່ອເປັນທິດທາງໃນການພັດທະນາແຜນງົບປະມານປະຈຳປີຂອງສູນກາງ ແລະ ທ້ອງຖິ່ນ ແລະ ຂະບວນການທົບທວນງົບປະມານ ສະທ້ອນໃຫ້ເຫັນຄວາມຈຳເປັນໃນການຫຼຸດຜ່ອນຄວາມແຕກໂຕນ ແລະ ປັບປຸງຜົນການຮຽນຂອງນັກຮຽນ | IO 7.2: ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ ທົບທວນ ແລະ ຮັບຮອງແຜນງົບປະມານກາງສະໄໝຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ | IO 7.3: ການຄາດຄະເນການສະໜັບສະໜູນທາງດ້ານການເງິນຂອງຄູ່ຮ່ວມພັດທະນາ ສອດຄ່ອງກັບເປົ້າໝາຍບູລິມະສິດຂອງແຜນພັດທະນາຂະແໜງການສຶກສາ ແລະ ກິລາ ແລະ ແຜນການຊ່ວຍເຫຼືອໃໝ່ ຕ້ອງຮັບປະກັນວ່າ ກະຊວງສຶກສາທິການ ແລະ ກິລາ ຈະສາມາດສືບຕໍ່ຈັດຕັ້ງປະຕິບັດໄດ້ໄດ້ຢ່າງຍືນຍົງ |
| IO 7.4: ໄດ້ມີການລະດົມຊັບພະຍາກອນຢ່າງກວ້າງຂວາງ ໂດຍຜ່ານການຮ່ວມມືສາກົນ ລວມທັງອີງການຈັດຕັ້ງການກຸສົນອື່ນໆ | IO 8.1. ໜ່ວຍສະໂມສອນກິລາ-ກາຍະກຳ ຂັ້ນບ້ານ, ເມືອງ ແລະ ແຂວງ/ນະຄອນຫຼວງ, ການມີສ່ວນຮ່ວມຂອງມວນຊົນ, ສັງຄົມ ໃນຂະບວນການເຄື່ອນໄຫວກິລາ-ກາຍະກຳ ເພີ່ມຂຶ້ນ ໃນຂັ້ນແຂວງ-ນະຄອນຫຼວງ, ເມືອງ, ບ້ານ ແລະ ສຳນັກງານ-ອົງການ, ບໍລິສັດ, ໂຮງຈັກ-ໂຮງງານ ແລະ ການຈັດຕັ້ງຕ່າງໆ ທັງພາກລັດ-ເອກະຊົນ ແລະ ການພັດທະນາກິລາຄົນພິການໃຫ້ມີປະລິມານເພີ່ມຂຶ້ນ, ມີຄຸນະພາບທຽບເທົ່າກັບສາກົນ | IO 8.2. ການຮຽນ-ການສອນ ພາລະ ແລະ ສີລະປະສຶກສາ ໄດ້ຮັບການປະຕິບັດຢ່າງກວ້າງຂວາງຂຶ້ນ, ຈຳນວນບຸກຄະລາກອນນັກວິຊາການດ້ານພາລະສຶກສາເພີ່ມຂຶ້ນ, ມີຈຳນວນນັກຮຽນທີ່ເຂົ້າຮ່ວມການແຂ່ງຂັນກິລາພາຍໃນປະເທດ, ພາກພື້ນ ແລະ ສາກົນຫຼາຍຂຶ້ນ |
| IO 8.3. ນັກກິລາທີ່ມີພອນສະຫວັນ, ນັກກິລາລະດັບຊາດ ແລະ ນັກກິລາອາຊີບມີຄວາມສາມາດເທົ່າທຽມລະດັບມາດຕະຖານຂອງອະນຸພາກພື້ນ ແລະ ສາກົນ | IO 8.4. ຜູ້ບໍລິຫານ, ຄູຝຶກ, ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາມີຄວາມສາມາດທຽບເທົ່າມາດຕະຖານສາກົນ | |

## 3. ສິ່ງທ້າທາຍທົ່ວໄປຂອງການສຶກສາຊັ້ນສູງ ສປປ ລາວ

ການວິເຄາະຄວາມຕ້ອງການ ແມ່ນຖືກຈັດຕັ້ງປະຕິບັດໃນກອບໜ້າວຽກ 2.2, ຊ່ວຍຊີ້ບອກສິ່ງທ້າທາຍຕົ້ນຕໍສຳລັບລະບົບການສຶກສາຊັ້ນສູງໃນ ສປປ ລາວ, ເຊິ່ງຫຼຸດຜ່ອນຄວາມອາດສາມາດຂອງລະບົບການສຶກສາຊັ້ນສູງ ໃນການເພີ່ມຂີດຄວາມສາມາດໃນການກ້າວສູ່ສາກົນ:

1. ໂຄງລ່າງພື້ນຖານມີຈຳກັດ: ສິ່ງອຳນວຍຄວາມສະດວກຕ່າງໆ, ອຸປະກອນ, ແລະ ຫ້ອງທົດລອງ.
2. ການສັບຊ້ອນບຸກຄະລາກອນໃນການສຶກສາຊັ້ນສູງຂອງພາກລັດແມ່ນມີຈຳກັດ.
3. ຄວາມອາດສາມາດ ແລະ ທັກສະການສອນ, ພະນັກງານວິຊາການ ແລະ ບໍລິຫານ ຍັງບໍ່ພຽງພໍ.
4. ລະບົບການປະກັນຄຸນະພາບຂອງການສຶກສາໃນລະດັບສະຖາບັນ ແລະ ລະດັບຊາດ ກຳລັງພັດທະນາ ແຕ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.
5. ການອອກແບບຫຼັກສູດຍັງບໍ່ທັນສະໄໝ.

6. ຫຼັກສູດຍັງບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ບໍ່ມີການຮ່ວມມືລະຫວ່າງມະຫາວິທະຍາໄລ ແລະ ພາກສ່ວນອຸດສາຫະກຳ.
7. ຂາດທຶນຮອນ ແລະ ຄວາມອາດສາມາດໃນວຽກງານການຄົ້ນຄວ້າວິໄຈ.

ນອກຈາກນັ້ນ, ການຮ່ວມມືສາກົນໃນລະດັບການສຶກສາຊັ້ນສູງ ແມ່ນມີລັກສະນະບັນຫາທີ່ເກີດຂຶ້ນເລື້ອຍໆ ດັ່ງຕໍ່ໄປນີ້:

1. ຄວາມອາດສາມາດດ້ານພາສາຕ່າງປະເທດຂອງນັກສຶກສາ ແລະ ພະນັກງານວິຊາການຍັງບໍ່ເຂັ້ມແຂງ ໂດຍສະເພາະພາສາອັງກິດ.
2. ຂາດລະບົບການຮັບຮູ້ ແລະ ການໂອນໜ່ວຍກິດທີ່ຄົບຖ້ວນ ແລະ ເປັນເອກະພາບກັນ.
3. ມາດຕະຖານສາກົນ ແລະ ງົບປະມານສະໜັບສະໜູນການເຄື່ອນໄຫວກິດຈະກຳແລກປ່ຽນນັກສຶກສາ ແລະ ພະນັກງານຍັງຕໍ່າ.
4. ການຮັບນັກສຶກສາຕ່າງປະເທດເຂົ້າຮຽນ ແລະ ສົ່ງນັກສຶກສາພາຍໃນໄປຮຽນຕ່າງປະເທດຍັງບໍ່ທັນສົມດູນກັນ.
5. ຍັງຂາດຄວາມເຂົ້າໃຈການເຂົ້າເຖິງແຫຼ່ງທຶນສາກົນ ເພື່ອການຄົ້ນຄວ້າ.

ຕໍ່ກັບທຸກສິ່ງທີ່ກ່າວມາຂ້າງເທິງ, ຄູ່ຮ່ວມມື OPEN ໄດ້ກຳນົດແຜນນະໂຍບາຍເພື່ອຈັດຕັ້ງປະຕິບັດຍຸດທະສາດການຫັນເປັນສາກົນຂອງການສຶກສາຊັ້ນສູງຂອງລາວ ເພື່ອຜ່ານຜ່າສິ່ງທ້າທາຍ ແລະ ອຸປະສັກຕ່າງໆທີ່ກີດຂວາງການຫັນເປັນສາກົນຢ່າງມີປະສິດທິພາບຂອງມະຫາວິທະຍາໄລແຫ່ງຕ່າງໆໃນ ສປປ ລາວ.

## 4. ແຜນນະໂຍບາຍໃນການປະຕິບັດຍຸດທະສາດການຫັນເປັນສາກົນຂອງການສຶກສາຊັ້ນສູງໃນ ລາວ

ແຜນນະໂຍບາຍຂອງໂຄງການ OPEN ຈະສະໜັບສະໜູນແຜນພັດທະນາຂະແໜງການສຶກສາ ແລະ ກິລາ (ESSDP) ໂດຍມີການປະຕິບັດສະເພາະ ເພື່ອບັນລຸຂະແໜງການສຶກສາທີ່ມີໂຄງສ້າງ, ການບໍລິຫານຄຸ້ມຄອງ ແລະ ຊັບພະຍາກອນທີ່ເໝາະສົມ ເພື່ອສ້າງໂອກາດໃຫ້ພົນລະເມືອງລາວທຸກຄົນສາມາດເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ຊ່ວຍໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2025 ແລະ ເຮັດໃຫ້ການຈັດຕັ້ງປະຕິບັດມີຄວາມຄືບໜ້າຕາມເປົ້າໝາຍສະຫະສະຫວັດຂອງສະຫະປະຊາຊາດ (SDG-4)

**ແຜນນະໂຍບາຍໂຄງການ OPEN ມີໂຄງສ້າງຕາມບູລິມະສິດສຳລັບການຈັດຕັ້ງປະຕິບັດລະບຸໄວ້ໃນກອບໜ້າວຽກ 2.2:**

1. ປັບປຸງປະສິດທິພາບຂອງສະຖາບັນ, ພື້ນຖານໂຄງລ່າງ ແລະ ຄວາມສາມາດຂອງບຸກຄະລາກອນຫ້ອງການພົວພັນຕ່າງປະເທດ
2. ເພີ່ມທະວີການພົວພັນກັບບັນດາພາກສ່ວນທີ່ກ່ຽວຂ້ອງທັງລະດັບຊາດ ແລະ ສາກົນ
3. ການເສີມສ້າງຄວາມເຂັ້ມແຂງສາກົນໃນການປະຕິບັດໜ້າວຽກສະເພາະຕາມທີ່ຄາດໄວ້ໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) – ແຜນຍ່ອຍຂະແໜງການສຶກສາຊັ້ນສູງ

3 ບູລິມະສິດ: ການຈັດຕັ້ງປະຕິບັດ, ເປົ້າໝາຍສຳຄັນການປະຕິບັດ ແລະ ຕົວຊີ້ວັດ ໄດ້ຖືກກຳນົດເຊັ່ນດຽວກັນກັບຍຸດທະສາດ ແລະ ກິດຈະກຳ ເພື່ອບັນລຸບຸລິມະສິດດັ່ງກ່າວ. ນອກຈາກນັ້ນ, ບັນດາບຸລິມະສິດດັ່ງກ່າວ ຍັງໄດ້ຖືກແບ່ງອອກ ສຸ່ມໃສ່ 3 ເສົາຄ້ຳພື້ນຖານຂອງຂະແໜງການສຶກສາຊັ້ນສູງຄື: ສະຖາບັນ, ບຸກຄົນ ແລະ ລະບົບ.

ເຖິງຢ່າງໃດກໍ່ຕາມ, ເອກະສານທີ່ບໍ່ມີພັນທະຜູກມັດທາງກົດໝາຍສະບັບນີ້ ມີຈຸດປະສົງເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດຍຸດທະສາດການຫັນເປັນສາກົນຂອງລາວ. ຕາຕະລາງຂ້າງລຸ່ມນີ້ສະແດງເຖິງແຜນຈັດຕັ້ງປະຕິບັດ ແລະ ກຳນົດເປົ້າໝາຍເວລາ ສຳລັບການແກ້ໄຂບັນຫາບູລິມະສິດທີ່ໄດ້ກ່າວມາຂ້າງເທິງ.

| ການຈັດຕັ້ງປະຕິບັດ | ຕົວຊີ້ວັດ | ຍຸດທະສາດ | ກິດຈະກຳ | ຈຸດສຸມເສົາຄ້ຳ | ຜົນໄດ້ຮັບລະດັບກາງ ແລະ ລະດັບສູງ | ສິ່ງທ້າທາຍ, ຂໍ້ແນະນຳ, ຕົວຢ່າງ ຂອງໂຄງການທີ່ກຳລັງດຳເນີນຢູ່, ວຽກປະຕິບັດທີ່ເຮັດໄດ້ດີ | ເວລາຄາດການ (ປີ) |
|---|---|---|---|---|---|---|---|
| **ບູລິມະສິດສຳລັບການປະຕິບັດ 100. ປັບປຸງປະສິດທິພາບຂອງສະຖາບັນ, ພື້ນຖານໂຄງລ່າງ ແລະ ຄວາມສາມາດຂອງບຸກຄະລາກອນຫ້ອງການພົວພັນຕ່າງປະເທດ** | | | | | | | |
| 110. ການພັດທະນາລະດັບພາສາອັງກິດພາຍໃນມະຫາວິທະຍາໄລ; ການຈັດລຳດັບຄວາມສຳຄັນຂອງຫ້ອງການພົວພັນຕ່າງປະເທດ ແລະ ພະນັກງານວິຊາການ. | KPI 1.1.1 ຈຳນວນພະນັກງານພົວພັນຕ່າງປະເທດທີ່ໄດ້ລົງທະບຽນຮຽນໃນຫຼັກສູດພາສາອັງກິດ | 1.1. ຄົ້ນຫາ, ສະໝັກ ແລະ ລົງທະບຽນ ໃນຫຼັກສູດພາສາອັງກິດ (ໂດຍສະເພາະ ແມ່ນຫຼັກສູດຮຽນທາງໄກ) ໂດຍທຶນການສຶກສາຈາກສະຖາບັນສາກົນເຊັ່ນ: ອາຊຽນ, ສະພາອັງກິດ, ໂຄງການຮ່ວມມືຂອງສະຖາບັນການສຶກສາຊັ້ນສູງ ແລະ ອື່ນໆ. ສະເໜີຂໍອາສາສະໝັກຄູສອນພາສາອັງກິດ (ສອນແບບເຊິ່ງໜ້າ ແລະ ທາງໄກ) ເຊັ່ນ: ອາສາສະໝັກຈາກສະຖາບັນລາວ-ອົດສະຕຣາລີ ແລະ ສະຖາບັນອື່ນໆ. | ຫຼັກສູດຝຶກອົບຮົມສຳລັບພະນັກງານ ພົວພັນຕ່າງປະເທດ ເພື່ອຍົກລະດັບຄວາມຮູ້ ແລະ ທັກສະພາສາອັງກິດ. | ຄົນ | IO 1.1 ຫຼັກສູດທີ່ໄດ້ຮັບການປັບປຸງ ແລະ ຫຼັກສູດລວມຖືກນຳມາໃຊ້ໃນທຸກລະດັບ | ສິ່ງທ້າທາຍ:<br>ທຶນການສຶກສາ; ແຮງຈູງໃຈ/ແຮງບັນດານໃຈ; ເວລາທີ່ຈຳກັດ<br><br>ຄຳແນະນຳ:<br>ສ້າງແຜນຝຶກອົບຮົມໄລຍະສັ້ນ ແລະ ໄລຍະຍາວ; ຊອກຫາງົບປະມານ ແລະ ແຫຼ່ງທຶນໃໝ່; ສ້າງນະໂຍບາຍ ແລະ ແຮງຈູງໃຈ<br><br>ຕົວຢ່າງ:<br>ມຊ ໄດ້ຮັບທຶນຝຶກອົບຮົມໄລຍະຍາວ (6 ເດືອນ) ເພື່ອພັດທະນາທັກສະພາສາອັງກິດຂອງສະຖາບັນຕ່າງປະເທດ ເຊັ່ນ: ການສອນ ພາສາອັງກິດຜ່ານລະບົບທາງໄກໃຫ້ພະນັກງານ ໂດຍອາສາສະໝັກຈາກສະຖາບັນລາວ-ອົດສະຕຣາລີ ແລະ ສະຖານທູດອາເມລິກາ ສຳລັບທັງ 4 ມະຫາວິທະຍາໄລ. | 2024 |
| | KPI 1.1.2 ຈຳນວນພະນັກງານວິຊາການທີ່ລົງທະບຽນໃນຫຼັກສູດພາສາອັງກິດ | | ຫຼັກສູດຝຶກອົບຮົມສຳລັບພະນັກງານວິຊາການເພື່ອໃຫ້ມີຄວາມຮູ້ພາສາອັງກິດໃນລະດັບສູງ | | IO 2.1: ພັດທະນາຄວາມສາມາດຂອງຄູ ໂດຍການຊ່ວຍເຫຼືອຈາກກຸ່ມ ແລະ ທີ່ປຶກສາດ້ານການສອນ | | 2025 |
| 120. ການພັດທະນາທັກສະການຄຸ້ມຄອງໂຄງການ ແລະ ການລະດົມທຶນຂອງພະນັກງານພົວພັນຕ່າງປະເທດ. | KPI 1.2.1 ຈຳນວນຄົນທີ່ລົງທະບຽນຮຽນໃນຫຼັກສູດການລະດົມທຶນ | 1.2. ການມີສ່ວນຮ່ວມກັບບັນດາໂຄງການຮ່ວມມືສ້າງຂີດຄວາມສາມາດສາກົນເຊັ່ນ: ອາຊຽນ, Erasmus+, ອົງການຮ່ວມມືສາກົນ ແລະ ອື່ນໆ | ຫຼັກສູດຝຶກອົບຮົມກ່ຽວກັບການສະໜອງທຶນ ແລະ ວິທີການເຮັດວຽກສຳລັບການຮ່ວມມືສາກົນພາຍໃນພາກພື້ນຂອງຕົນເອງ ແລະ ໃນລະດັບສາກົນ ສຳລັບຜູ້ອຳນວຍການ ແລະ ພະນັກງານພົວພັນຕ່າງປະເທດ | | IO 2.5: ສ້າງຂີດຄວາມອາດສາມາດຂອງຜູ້ອຳນວຍການໃນການປັບປຸງການຮຽນ-ການສອນ | ສິ່ງທ້າທາຍ:<br>ຍັງມີຂໍ້ຈຳກັດ ດ້ານທັກສະການຄຸ້ມຄອງໂຄງການ ແລະ ຄວາມຊ່ຽວຊານດ້ານການລະດົມທຶນ, ເຄືອຂ່າຍ; ພວກເຂົາເຈົ້າບໍ່ມີປະສົບການທີ່ກ່ຽວຂ້ອງກັບການລະດົມທຶນ<br><br>ຄຳແນະນຳ:<br>ການສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນລວມທັງຜູ້ອຳນວຍການໂດຍຜ່ານການຝຶກອົບຮົມ ແລະ ການເຜີຍແຜ່ກ່ຽວກັບການລະດົມທຶນທີ່ກ່ຽວຂ້ອງ<br><br>ຕົວຢ່າງ:<br>ການຝຶກອົບຮົມ ແລະ ແລກປ່ຽນຄວາມຮູ້ ໂດຍຜ່ານການແລກປ່ຽນບົດສອນລະຫວ່າງສະຖາບັນ ແລະ ພາກສ່ວນທີ່ເໝາະສົມ.  ບາງສະຖາບັນໄດ້ຮັບການລະດົມທຶນຈາກມະຫາວິທະຍາໄລຣົງກົງ | 2025 |
| | KPI 1.2.2. ຈຳນວນຄົນທີ່ລົງທະບຽນໃນຫຼັກສູດການຂຽນບົດສະເໜີໂຄງການ ແລະ ການຄຸ້ມຄອງໂຄງການ | | ຫຼັກສູດຝຶກອົບຮົມ ແລະ ກິດຈະກຳການສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນພົວພັນຕ່າງປະເທດ ກ່ຽວກັບການ | | IO 1.2 ປັບປຸງການປະເມີນຜົນການຮຽນຮູ້ຂອງນັກຮຽນຢູ່ຊັ້ນ ປ3, ປ5, ມ4 ແລະ ມ7 | | 2023 |

| | | | | | | | |
|---|---|---|---|---|---|---|---|
| | | | ຮ່າງບົດສະເໜີ, ການປະຕິບັດໂຄງການ ແລະ ບົດລາຍງານ | | | | |
| 130. ສັງລວມແຜນວຽກ, ຄວາມຖືກຕ້ອງຕາມກົດໝາຍ ແລະ ການປະສານງານຂອງຫ້ອງການພົວພັນຕ່າງປະເທດພາຍໃນສະຖາບັນ. | KPI 1.3.1 ແຜນຍຸດທະສາດຂອງຫ້ອງການພົວພັນຕ່າງປະເທດທີ່ຖືກຮັບຮອງ ແລະ ອະນຸມັດຢ່າງເປັນທາງການຈາກສະຖາບັນ | 1.3. ການສ້າງຕັ້ງການບໍລິການທີ່ແຕກຕ່າງພາຍໃນມະຫາວິທະຍາໄລ ໂດຍມີຄວາມເປັນເອກະລາດຂອງການຫ້ອງການພົວພັນຕ່າງປະເທດ, ເພື່ອດຶງດູດການສະໜອງທຶນ ແລະ ການມີສ່ວນຮ່ວມກັບຜູ້ມີສ່ວນຮ່ວມອື່ນໆ. | ການພັດທະນາແຜນຍຸດທະສາດສາກົນສະເພາະເຈາະຈົງສຳລັບຫ້ອງການພົວພັນຕ່າງປະເທດແຕ່ລະສະຖາບັນຂອງສະມາຄົມໂຄງການ OPEN ເພື່ອຈັດຕັ້ງປະຕິບັດ, ປະສານ ແລະ ສ້າງລະບົບການດຳເນີນການພົວພັນສາກົນໃນລະດັບສະຖາບັນການສຶກສາຊັ້ນສູງ. | ລະບົບ | IO 3.3 ເງິນບໍລິຫານໂຮງຮຽນສອດຄ້ອງກັບຄວາມຕ້ອງການຂອງໂຮງຮຽນຫຼາຍຂຶ້ນ ເພື່ອຫຼຸດຜ່ອນຄວາມແຕກໂຕນ | ສິ່ງທ້າທາຍ:<br>ຍັງຂາດປະສົບການໃນການບໍລິຫານ,ການພັດທະນາຂະບວນການ ແລະ ຄວາມເປັນເອກະລາດຂອງມະຫາວິທະຍາໄລຍັງບໍ່ພຽງພໍ; ຂະບວນການ ຫຼື ຂັ້ນຕອນຫຼາຍເກີນໄປ ແລະ ບໍ່ມີກົດລະບຽບ ຫຼື ຄູ່ມືທີ່ຊັດເຈນກ່ຽວກັບການຫັນເປັນສາກົນ; ການເຊື່ອມໂຍງລະຫວ່າງມະຫາວິທະຍາໄລຍັງຈຳກັດ, ທັກສະການປະສານງານ, ທັກສະພາສາອັງກິດ ແລະ ທັກສະຄວາມເປັນຜູ້ນຳຍັງບໍ່ພຽງພໍ<br><br>ຄຳແນະນຳ:<br>ສະໜອງຂັ້ນຕອນ ແລະ ຄູ່ມືຕາມມາດຕະຖານສາກົນ; ປັບປຸງທັກສະພາສາອັງກິດ ແລະ ຄວາມອາດສາມາດຂອງພະນັກງານພົວພັນຕ່າງປະເທດ, ຝຶກອົບຮົມ ແລະ ໂຄງການແລກປ່ຽນ; ການຈັດຕັ້ງປະຕິບັດນະໂຍບາຍຊັດເຈນ<br><br>ຕົວຢ່າງ:<br>ໂຄງການ Erasmus+ | 2023 |
